ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສຶກສາທິການ ແລະ ກິລາ

ເລກທີ 1441 /ສສກ

ນະຄອນຫຼວງວຽງຈັນ, ວັນທີ 19 ເມສາ 2022

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ

- ອີງຕາມ ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ) ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015;
- ອີງຕາມ ດຳລັດນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021;
- ອີງຕາມ ການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ.

**ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ຕົກລົງ:**

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍ, ຍຸດທະສາດ, ແຜນພັດທະນາການສຶກສາ ແລະ ກິລາ ໂດຍສະເພາະການຄຸ້ມຄອງ ແລະ ພັດທະນາ ວຽກງານ ການສຶກສາ, ວິທະຍາສາດ ແລະ ກິລາ ພາຍໃນແຂວງ, ນະຄອນຫຼວງ ໃຫ້ມີຄຸນນະພາບ, ປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ຂຽນດ້ວຍອັກສອນຫຍໍ້ວ່າ "ສກຂ", "ສກນວ" ເປັນອົງການບໍລິຫານຕາມສາຍຕັ້ງໃນລະບົບບໍລິຫານ, ຄຸ້ມຄອງ ຂອງກະຊວງການສຶກສາທິການ ແລະ ກິລາ ຊຶ່ງມີພາລະບົດບາດ ໃນການຜັນຂະຫຍາຍ, ວາງແຜນ, ຈັດຕັ້ງປະຕິບັດ, ຄຸ້ມຄອງ, ກວດກາ ແລະ ປະເມີນຜົນວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ມີໜ້າທີ່ດັ່ງນີ້:

1. ຜັນຂະຫຍາຍແນວທາງນະໂຍບາຍ, ກົດລະບຽບ, ມະຕິ, ຄຳສັ່ງຂອງພັກ, ກົດໝາຍຂອງລັດ, ທິດທາງແຜນການ ແລະ ຍຸດທະສາດຂອງກະຊວງສຶກສາທິການ ແລະ ກິລາ ເພື່ອສ້າງເປັນແຜນພັດທະນາວຽກງານຂອງຕົນ;
2. ສ້າງ, ປັບປຸງ ບັນດາ ນິຕິກຳ, ລະບຽບການຕ່າງໆ ໃນການຄຸ້ມຄອງວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ພາຍໃນແຂວງ, ນະຄອນຫຼວງ;
3. ໂຄສະນາເຜີຍແຜ່ ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ ພາຍໃນແຂວງ, ນະຄອນຫຼວງ;
4. ປັບປຸງການຈັດຕັ້ງ ແລະ ການຄຸ້ມຄອງການສຶກສາ ແລະ ກິລາ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ, ນະຄອນຫຼວງ ແລະ ລັດຖະບານ ໃນແຕ່ລະໄລຍະ;
5. ຊີ້ນຳ, ນຳພາ ຈັດຕັ້ງປະຕິບັດແຜນການ ການສຶກສາກ່ອນໄວຮຽນ, ສາມັນສຶກສາ, ການລຶບລ້າງຄວາມບໍ່ຮູ້ໜັງສື, ການຍົກລະດັບ ແລະ ຝຶກອົບຮົມວິຊາຊີບຂັ້ນພື້ນຖານ;
6. ຈັດພິມຫົວບົດສອບເສັງ, ຈັດຕັ້ງປະຕິບັດການສອບເສັງຈົບຊັ້ນ, ອອກປະກາສະນິຍະບັດຊັ້ນມັດທະຍົມຕອນປາຍໃນໂຮງຮຽນ ທັງພາກລັດ ແລະ ເອກະຊົນ ແລະ ຂຶ້ນທະບຽນປະກາສະນິຍະບັດມັດທະຍົມຕອນຕົ້ນ ແລະ ອາຊີວະສຶກສາຊັ້ນຕົ້ນ;
7. ຄົ້ນຄວ້າ ແລະ ຄັດເລືອກ ການໃຫ້ຕຳແໜ່ງວິຊາການຄູ ພາຍໃນແຂວງ, ນະຄອນຫຼວງ;
8. ສ້າງ, ພັດທະນາຫຼັກສູດທ້ອງຖິ່ນ, ອຸປະກອນ, ສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອຮັບໃຊ້ວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ພາຍໃນ ແຂວງ, ນະຄອນຫຼວງ;
9. ຄຸ້ມຄອງບັນດາ ໂຮງຮຽນມັດທະຍົມຕອນປາຍ, ມັດທະຍົມສົມບູນ, ໂຮງຮຽນສາມັນກິນນອນຊົນເຜົ່າ, ໂຮງຮຽນວິຊາຊີບ, ສູນຝຶກວິຊາຊີບ, ສູນສຶກສານິເທດ, ສູນໄອຊີທີ, ສູນການສຶກສານອກໂຮງຮຽນ, ວິທະຍາໄລ, ສະຖາບັນການສຶກສາສົງ, ສະໂມສອນກິລາ, ຫົວໜ່ວຍທຸລະກິດກິລາ, ສະໜາມກິລາ ແລະ ຫົວໜ່ວຍວິຊາການອື່ນ ທີ່ຂຶ້ນກັບແຂວງ, ນະຄອນຫຼວງ;
10. ສ້າງແຜນພັດທະນາຊັບພະຍາກອນມະນຸດ, ແຜນການກໍ່ສ້າງ, ຝຶກອົບຮົມ, ຍົກລະດັບ ຄູ, ຄູຝຶກກິລາ-ກາຍຍະກຳ ແລະ ບຸກຄະລາກອນການສຶກສາ ແລະ ກິລາ ພາຍໃນແຂວງ, ນະຄອນຫຼວງ;
11. ສ້າງແຜນການຈັດຕັ້ງການຮຽນ-ການສອນ ວຽກງານການສຶກສາຮຽນຮູ້ຕະຫຼອດຊີວິດ ພາຍໃນແຂວງ, ນະຄອນຫຼວງ;
12. ຈັດຕັ້ງປະຕິບັດວຽກງານພະລະ ແລະ ສິລະປະສຶກສາ, ກິລາ-ກາຍຍະກຳ ມວນຊົນ, ກິລາລະດັບສູງ, ພາຍໃນແຂວງ, ນະຄອນຫຼວງ;
13. ຄຸ້ມຄອງ, ສ້າງຖານເກັບກຳຂໍ້ມູນ ຂ່າວສານການສຶກສາ ແລະ ກິລາ, ຄູ ແລະ ນັກຮຽນພາຍໃນແຂວງ, ນະຄອນຫຼວງ;
14. ຄຸ້ມຄອງຄູ ແລະ ບຸກຄະລາກອນການສຶກສາ ແລະ ກິລາ ຕາມການແບ່ງຂັ້ນຄຸ້ມຄອງ;

15. ຄົ້ນຄວ້າ ການບັນຈຸ, ສັບຊ້ອນ, ການແຕ່ງຕັ້ງ, ຍົກຍ້າຍ, ປົດຕຳແໜ່ງ, ຍ້ອງຍໍ, ປະຕິບັດວິໄນ, ການກຳນົດຕຳແໜ່ງງານຂອງຄູ ແລະ ບຸກຄະລາກອນການສຶກສາ ແລະ ກິລາ ຕາມກົດໝາຍ ແລະ ລະບຽບການ;
16. ຄຸ້ມຄອງ ແລະ ບໍລິຫານງົບປະມານການເງິນ, ການບັນຊີ, ຊັບສິນ-ວັດສະດຸ, ການປຸກສ້າງ-ສ້ອມແປງ, ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ການເຊັນສັນຍາຜູກພັນ ແລະ ຊຳລະສະສາງການຈັດຊື້, ຈັດຈ້າງ ຕາມການແບ່ງຂັ້ນຄຸ້ມຄອງ ພ້ອມທັງສະຫຼຸບ ແລະ ລາຍງານ ຕາມລະບຽບທີ່ໄດ້ກຳນົດໄວ້;
17. ປະສານສົມທົບກັບພາກສ່ວນຕ່າງໆ ແລະ ນຳເອົາຜົນສຳເລັດຂອງການຄົ້ນຄວ້າ ທາງດ້ານວິທະຍາສາດ ແລະ ນະວັດຕະກຳ ຈັດຕັ້ງເຜີຍ ໃຫ້ແກ່ການຈັດຕັ້ງ ແລະ ສັງຄົມ ພາຍໃນແຂວງ, ນະຄອນຫຼວງ;
18. ເກັບກຳ, ແນະນຳ, ບໍລິການ ແລະ ສະໜອງຂໍ້ມູນຂ່າວສານ ທາງດ້ານວິທະຍາສາດ ແລະ ນະວັດຕະກຳ ໃຫ້ແກ່ການຈັດຕັ້ງ ແລະ ສັງຄົມ ພາຍໃນແຂວງ, ນະຄອນຫຼວງ ຢ່າງທົ່ວເຖິງ;
19. ຊີ້ນຳ ຫ້ອງການສຶກສາທິການ ແລະ ກິລາ ເມືອງ, ເທດສະບານ, ນະຄອນ;
20. ພົວພັນ, ຮ່ວມມື ກັບສາຍຕັ້ງ, ສາຍຂວາງ ແລະ ອົງການຈັດຕັ້ງສາກົນ ທັງພາຍໃນ, ຕ່າງປະເທດ ເພື່ອພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ ພາຍໃນແຂວງ, ນະຄອນຫຼວງ ຕາມການມອບໝາຍ;
21. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນ, ປະກັນຄຸນນະພາບ ແລະ ສະຫຼຸບ ລາຍງານການຈັດຕັ້ງປະຕິບັດວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ໃຫ້ສາຍຕັ້ງ ແລະ ສາຍຂວາງທີ່ຕິດພັນ ຂຶ້ນກັບໃນແຕ່ລະໄລຍະ;
22. ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍ ຂອງກະຊວງສຶກສາທິການ ແລະ ກິລາ ແລະ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

**ມາດຕາ 4 ຂອບເຂດສິດ**

ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ ມີຂອບເຂດສິດ ດັ່ງນີ້:

1. ສະເໜີຕໍ່ລັດຖະມົນຕີ ແລະ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາ ແລະ ຮັບຮອງແຜນພັດທະນາ ການສຶກສາ, ວິທະຍາສາດ ແລະ ກິລາ;
2. ສະເໜີຕໍ່ລັດຖະມົນຕີ ພິຈາລະນາ ແລະ ຮັບຮອງແຜນພັດທະນາຊັບພະຍາກອນມະນຸດ, ແຜນການກໍ່ສ້າງ, ຝຶກອົບຮົມ, ຍົກລະດັບຄູ ແລະ ບຸກຄະລາກອນການສຶກສາ ແລະ ກິລາ ພາຍໃນແຂວງ, ນະຄອນຫຼວງ.
3. ສະເໜີຕໍ່ລັດຖະມົນຕີ ແລະ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຈັດຕັ້ງການແຂ່ງຂັນກິລາ-ກາຍຍະກຳມວນຊົນ, ກິລາລະດັບສູງ ແລະ ກິລານັກຮຽນ ພາຍໃນແຂວງ, ນະຄອນຫຼວງ;
4. ສະເໜີລັດຖະມົນຕີພິຈາລະນາ, ອະນຸມັດ, ປັບປຸງ, ສ້າງ ຫຼື ຍຸບເລີກບັນດານິຕິກຳຄຸ້ມຄອງການສຶກສາ ແລະ ກິລາ ທີ່ບໍ່ສອດຄ່ອງ;
5. ສະເໜີຕໍ່ລັດຖະມົນຕີ ແລະ ເຈົ້າແຂວງ ພິຈາລະນາ, ອະນຸມັດ, ສ້າງຕັ້ງ ຫຼື ຍຸບເລີກການຈັດຕັ້ງ, ສະຖານການສຶກສາ ແລະ ສະໜາມກິລາ ໃນຂັ້ນຄຸ້ມຄອງຂອງຕົນ;

6. ສະເໜີການແຕ່ງຕັ້ງ, ປົດຕຳແໜ່ງ, ບັນຈຸ, ສັບຊ້ອນ, ຍົກຍ້າຍ, ຍ້ອງຍໍ, ປະຕິບັດວິໄນ, ການກຳນົດຕຳແໜ່ງງານຂອງຄູ ແລະ ບຸກຄະລາກອນການສຶກສາ ແລະ ກິລາ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ຕາມກົດໝາຍ ແລະ ລະບຽບການ;
7. ຄຸ້ມຄອງ ແລະ ນຳໃຊ້ ງົບປະມານ, ວັດຖຸ-ຊັບສິນ, ກອງທຶນ, ທຶນຊ່ວຍເຫຼືອປະເພດຕ່າງໆ ຕາມການອະນຸມັດຂອງລັດຖະມົນຕີ ແລະ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
8. ປະຕິບັດໂຄງການຊ່ວຍເຫຼືອລ້າ, ໂຄງການຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ຕາມການອະນຸມັດຂອງລັດຖະມົນຕີ ຫຼື ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
9. ສະເໜີລັດຖະມົນຕີ ຄຸ້ມຄອງ ຊັບສິນທາງປັນຍາ ແລະ ລິຂະສິດ ທາງດ້ານການສຶກສາ, ວິທະຍາສາດ ແລະ ກິລາ;
10. ປະຕິບັດວຽກງານອື່ນຕາມການມອບໝາຍຂອງລັດຖະມົນຕີ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ໂຄງປະກອບກົງຈັກການຈັດຕັ້ງ ຂອງພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ແມ່ນຂຶ້ນກັບການຕົກລົງຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ອີງໃສ່ສະພາບຈຸດພິເສດ, ບໍລິມາດວຽກຂອງແຕ່ລະແຂວງ, ນະຄອນຫຼວງ ບົນພື້ນຖານທີ່ກົງຈັກກະທັດຫັດ, ໜັກແໜ້ນ, ເຂັ້ມແຂງ ແລະ ເຄື່ອນໄຫວຢ່າງມີປະສິດທິພາບ ແລະ ປະສິດທິຜົນ ໂດຍການເຫັນດີເປັນເອກະພາບກັບ ກະຊວງສຶກສາທິການ ແລະ ກິລາ.

ນອກຈາກນັ້ນຍັງປະກອບມີ ໂຮງຮຽນມັດທະຍົມຕອນປາຍ, ໂຮງຮຽນມັດທະຍົມສົມບູນ, ໂຮງຮຽນສາມັນກົນນອນຊົນເຜົ່າ, ໂຮງຮຽນວິຊາຊີບ, ສູນຝຶກວິຊາຊີບ, ສູນໄອຊີທີ, ສູນການສຶກສານອກໂຮງຮຽນ, ວິທະຍາໄລ, ສະຖາບັນການສຶກສາສົງ, ສະໂມສອນກິລາ, ຫົວໜ່ວຍທຸລະກິດກິລາ, ສະໜາມກິລາ ແລະ ຫົວໜ່ວຍວິຊາການອື່ນ ໂດຍມີຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວສະເພາະ ພາຍໃຕ້ການຄຸ້ມຄອງຂອງ ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ໂດຍການເຫັນດີເປັນເອກະພາບຂອງກະຊວງສຶກສາທິການ ແລະ ກິລາ.

### ມາດຕາ 6 ໂຄງປະກອບບຸກຄະລາກອນ

1. ຫົວໜ້າພະແນກ ຈຳນວນ 01 ທ່ານ, ມີຄວາມຮັບຜິດຊອບຕໍ່ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ໃນການຄຸ້ມຄອງຕາມຂະແໜງການຕົນຮັບຜິດຊອບ ຊຶ່ງມີໜ້າທີ່ ແລະ ຂອບເຂດສິດ ຕາມທີ່ກຳນົດໄວ້ໃນ ມາດຕາ 3 ແລະ ມາດຕາ 4 ຂອງຂໍ້ຕົກລົງສະບັບນີ້;

   ໃນເວລາຕິດຂັດ ຫົວໜ້າພະແນກ ຕ້ອງມອບສິດ ໃຫ້ຮອງຫົວໜ້າພະແນກທ່ານໃດໜຶ່ງເປັນຜູ້ຮັກສາການແທນ.

2. ມີຮອງຫົວໜ້າພະແນກ ຈຳນວນໜຶ່ງ ຊ່ວຍຫົວໜ້າພະແນກ ໃນການຊີ້ນຳວຽກງານຂອງຕົນ, ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າພະແນກ;

ຮອງຫົວໜ້າພະແນກເປັນຜູ້ຮັກສາການແທນ ໃນເວລາຫົວໜ້າຫ້ອງການຕິດຂັດ ພ້ອມທັງ, ລາຍງານວຽກງານທີ່ໄດ້ຈັດຕັ້ງປະຕິບັດໃນໄລຍະຮັກສາການແທນນັ້ນ ໃຫ້ຫົວໜ້າພະແນກ ພາຍຫຼັງກັບມາປະຈຳການ.

3. ຫົວໜ້າຂະແໜງ, ຮອງຫົວໜ້າຂະແໜງ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຮັບຜິດຊອບວຽກງານຕາມການກຳນົດຕຳແໜ່ງງານ ທີ່ຂັ້ນເທິງອະນຸມັດ.

ສຳລັບການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 4

## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 7 ຫຼັກການ

ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ເຄື່ອນໄຫວຕາມຫຼັກການ ດັ່ງນີ້:

1. ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະກ່ຽວກັບບັນຫາລວມຂອງພະແນກ;
2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະ ເສີມຂະຫຍາຍຫົວຄິດປະດິດສ້າງ ຂອງພະນັກງານ, ລັດຖະກອນ ທຸກລະດັບ;
3. ທຸກການເຄື່ອນໄຫວ ຂອງພະແນກ ແມ່ນອີງໃສ່ກົດໝາຍ, ລະບຽບການ, ຫຼັກການລວມຂອງພັກ, ລັດຖະບານ, ນຳເອົາແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ ແລະ ນຳເອົາແຜນການປະຈຳປີ, ແຜນ 5 ປີ ຂອງກະຊວງ ແລະ ແຂວງ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

### ມາດຕາ 8 ແບບແຜນວິທີເຮັດວຽກ

ພະແນກສຶກສາທິການແລະກິລາ ແຂວງ, ນະຄອນຫຼວງ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີແບບແຜນ, ແຜນງານ ແລະ ໂຄງການລະອຽດ, ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານຂອງພະແນກ ໃຫ້ໄດ້ຮັບຜົນດີ;
2. ເຮັດວຽກມີການ ກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ ແລະ ຕີລາຄາຜົນໄດ້ຮັບ, ຜົນເສຍ;
3. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ແລະ ປະຕິບັດລະບອບລາຍງານໃຫ້ຂັ້ນເທິງ ແລະ ລັດຖະບານເປັນປົກກະຕິ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ ແລະ ຕາປະທັບ**

ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນຫຼວງ ມີງົບປະມານ ແລະ ຕາປະທັບ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກຳນົດ.

**ມາດຕາ 10 ການຈັດຕັ້ງປະຕິບັດ**

ຫ້ອງການກະຊວງ, ບັນດາກົມ, ອົງການທຽບເທົ່າກົມ, ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ, ຫົວໜ່ວຍການສຶກສາ ແລະ ຫົວໜ່ວຍກິລາຕ່າງໆ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ສະເໜີໃຫ້ທ່ານເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຊີ້ນຳ-ນຳພາ ຜັນຂະຫຍາຍຂໍ້ຕົກລົງ ສະບັບນີ້ອອກເປັນອັນລະອຽດ ໃຫ້ແກ່ການຈັດຕັ້ງປະຕິບັດເຄື່ອນໄຫວວຽກງານ ຂອງພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນຫຼວງ.

**ມາດຕາ 11 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 896/ສສກ, ລົງວັນທີ 26 ກຸມພາ 2018.

ລັດຖະມົນຕີ

ຮສ.ປອ ພຸດ ສິມມາລາວົງ

ບ່ອນສົ່ງ:

1. ກະຊວງພາຍໃນ 1 ສະບັບ.
2. ຫ້ອງການກະຊວງ 1 ສະບັບ.
3. ບັນດາກົມ ແລະ ສະຖາບັນ ບ່ອນລະ 1 ສະບັບ.
4. ພະແນກສຶກສາທິການ ແລະກິລາແຂວງ, ນະຄອນຫຼວງ ບ່ອນລະ 1 ສະບັບ,
5. ພາກສ່ວນທີ່ກ່ຽວຂ້ອງ 1 ສະບັບ.
6. ເກັບມ້ຽນ 3 ສະບັບ